ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເລກທີ 1291 /ຫສນຍ

ນະຄອນຫຼວງວຽງຈັນ, ວັນທີ 26. 11. 2020

# ແຈ້ງການ

ຮຽນ: - ບັນດາທ່ານ ລັດຖະມົນຕີ, ຫົວໜ້າອົງການທຽບເທົ່າ ທີ່ນັບຖື.
- ທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາທ່ານ ເຈົ້າແຂວງທົ່ວປະເທດ.

ເລື່ອງ: ທິດຊີ້ນຳເພີ່ມເຕີມກ່ຽວກັບການປະຕິບັດບັນດາມາດຕະການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ໃນໄລຍະແຕ່ນີ້ຮອດວັນທີ 31 ທັນວາ 2020.

- ອີງຕາມດຳລັດຂອງທ່ານ ນາຍົກລັດຖະມົນຕີ ສະບັບເລກທີ 93/ນຍ, ລົງວັນທີ 03 ມີນາ 2017 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ
- ອີງຕາມຄຳສັ່ງຂອງທ່ານ ນາຍົກລັດຖະມົນຕີ ສະບັບເລກທີ 06/ນຍ, ລົງວັນທີ 29 ມີນາ 2020.
- ອີງຕາມການລາຍງານຂອງຄະນະສະເພາະກິດຂັ້ນສູນກາງ ກ່ຽວກັບການຈັດຕັ້ງປະຕິບັດມາດຕະການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ໃນໄລຍະຜ່ານມາ.
- ອີງຕາມທິດຊີ້ນຳຂອງກອງປະຊຸມລັດຖະບານ ສະໄໝສາມັນປະຈຳເດືອນພະຈິກ 2020 ໃນວັນທີ 24 ພະຈິກ 2020.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງທິດຊີ້ນຳ ຂອງກອງປະຊຸມລັດຖະບານ ສະໄໝສາມັນປະຈຳເດືອນພະຈິກ 2020 ມາຍັງທ່ານຊາບ ແລະ ຈັດຕັ້ງປະຕິບັດ ດັ່ງນີ້:

1. ໃຫ້ໂຈະການອອກວີຊາ ສຳລັບຜູ້ເດີນທາງມາຈາກປະເທດຕົ້ນທາງທີ່ມີການລະບາດ ຂອງພະຍາດ COVID-19 ໃນຊຸມຊົນ ແຕ່ນີ້ຈົນເຖິງວັນທີ 31 ທັນວາ 2020.

2. ໃຫ້ໂຈະການອະນຸມັດຖ້ຽວບິນເໝົາລຳຈາກປະເທດທີ່ມີການລະບາດຂອງພະຍາດ COVID-19 ໃນຊຸມຊົນ, ຍົກເວັ້ນຖ້ຽວບິນເພື່ອມະນຸດສະທຳ ທີ່ມີຄວາມຈຳເປັນ ແຕ່ຕ້ອງໄດ້ມີການຄົ້ນຄວ້າລະອຽດຮັດກຸມ ແລະ ກວດກາຢ່າງເຄັ່ງຄັດເປັນແຕ່ລະກໍລະນີ. ພ້ອມກັນນີ້, ກໍ່ໃຫ້ກວດກາຜູ້ໂດຍສານຖ້ຽວບິນເໝົາລຳຈາກປະເທດບໍ່ມີການລະບາດ ຂອງເຊື້ອພະຍາດ COVID-19 ໃນຊຸມຊົນ ທີ່ໄດ້ຮັບອະນຸຍາດ, ເດັດຂາດບໍ່ໃຫ້ມີຜູ້ໂດຍສານຜ່ານ (Transit) ຈາກປະເທດທີ່ມີການລະບາດຂອງພະຍາດ COVID-19 ໃນຊຸມຊົນ ມານຳຖ້ຽວບິນເໝົາລຳດັ່ງກ່າວ.

3. ເຫັນດີໃຫ້ຈັດງານສະເຫຼີມສະຫຼອງວັນສຳຄັນຂອງພັກ, ຂອງຊາດ ແລະ ວັນສຳຄັນອື່ນໆ, ໂດຍໃຫ້ມີການກຳນົດເປົ້າໝາຍຜູ້ເຂົ້າຮ່ວມ ໃນລະດັບທີ່ເໝາະສົມ, ພ້ອມທັງປະຕິບັດມາດຕະການປ້ອງກັນ COVID-19 ຢ່າງເຂັ້ມງວດ ເຊັ່ນ: ການຮັກສາໄລຍະຫ່າງ, ໃສ່ຜ້າອັດປາກ-ດັງ, ມີນ້ຳຢາ ຫຼື ສະບູລ້າງມື.

4. ເຫັນດີໃຫ້ສືບຕໍ່ຈັດງານບຸນປະເພນີ ຂອງບັນດາເຜົ່າ ແລະ ຈັດກິດຈະກຳຕ່າງໆ ຂອງສັງຄົມ, ສຳລັບ ບຸນກິນຈຽງຂອງບາງເຜົ່າ ໃຫ້ຈັດຢູ່ພາຍໃນຄອບຄົວ ແລະ ບ້ານ. ຖ້າຈຳເປັນຈະຈັດແບບລວມ ໃນລະດັບທົ່ວແຂວງ ຫຼື ທົ່ວເມືອງ ແມ່ນ

ຕ້ອງໄດ້ຮັບອະນຸຍາດຈາກເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ເສຍກ່ອນ, ໂດຍໃຫ້ຖືກຕ້ອງຕາມຮີດຄອງປະເພນີອັນດີງາມຂອງຊາດ ແລະ ຂອງເຜົ່າ, ຫຼີກເວັ້ນການຫຼິ້ນກິນຟຸ່ມເຟືອຍ ແລະ ຕ້ອງປະຕິບັດມາດຕະການປ້ອງກັນ COVID-19 ຢ່າງເຂັ້ມງວດ ຕາມທີ່ໄດ້ລະບຸໃນຂໍ້ທີ 3 ຂອງແຈ້ງການສະບັບນີ້.

5. ໃຫ້ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສົມທົບກັບພາກສ່ວນກ່ຽວຂ້ອງແຕ່ລະຂັ້ນ ເພີ່ມທະວີການໂຄສະນາເຜີຍແຜ່ ໃຫ້ທຸກຄົນໃນສັງຄົມ ເຂົ້າໃຈວ່າ: ເຖິງແມ່ນວ່າປະເທດເຮົາບໍ່ມີການລະບາດພາຍໃນ ກໍ່ຕາມ ແຕ່ພະຍາດ COVID-19 ຍັງບໍ່ທັນຫາຍໄປຈາກໂລກ, ຍ້ອນແນວນັ້ນ ທຸກຄົນຕ້ອງຍົກສູງສະຕິຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດມາດຕະການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂ ການແຜ່ລະບາດຂອງພະຍາດ COVID-19 ຢ່າງເປັນເຈົ້າການຮ່ວມກັນ.

6. ມອບໃຫ້ກະຊວງປ້ອງກັນປະເທດ, ກະຊວງປ້ອງກັນຄວາມສະຫງົບ ແລະ ອົງການປົກຄອງທ້ອງຖິ່ນກ່ຽວຂ້ອງ ເພີ່ມທະວີການຕິດຕາມກວດກາ ການເຂົ້າ-ອອກ ຕາມດ່ານຊາຍແດນ ເພື່ອຮັບປະກັນ ບໍ່ໃຫ້ມີການເຂົ້າ-ອອກແບບຊະຊາຍ ຫຼື ມີການລັກລອບເຂົ້າ-ອອກ ບໍ່ຜ່ານດ່ານຊາຍແດນ ເພື່ອຮັບປະກັນບໍ່ໃຫ້ມີຄວາມສ່ຽງໃນການນຳເຊື້ອພະຍາດ COVID-19 ເຂົ້າມາແຜ່ລະບາດຢູ່ພາຍໃນປະເທດ.

7. ໃຫ້ອົງການປົກຄອງແຕ່ລະຂັ້ນ ເພີ່ມທະວີບົດບາດການຄຸ້ມຄອງ, ການຕິດຕາມ, ກວດກາ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດມາດຕະການ ປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂ ການແຜ່ລະບາດຂອງພະຍາດ COVID-19 ໃນຂອບເຂດທີ່ຕົນຮັບຜິດຊອບ ແລະ ລາຍງານໃຫ້ຂັ້ນເທິງຂອງຕົນຮັບຊາບ ຢ່າງເປັນປົກກະຕິ ແລະ ທັນເວລາ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

ລັດຖະມົນຕີ,

ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ຄຳເຈນ ວົງໂພສີ

ບ່ອນນຳສົ່ງ:

| | |
|---|---|
| - ນາຍົກ-ຮອງນາຍົກລັດຖະມົນຕີ | 04 ສະບັບ |
| - ຫ້ອງວ່າການສູນກາງພັກ | 01 ສະບັບ |
| - ບັນດາສະມາຊິກລັດຖະບານ, ທ່ານລະ | 01 ສະບັບ |
| - ອົງການຈັດຕັ້ງພັກ, ບ່ອນລະ | 01 ສະບັບ |
| - ສູນກາງແນວລາວສ້າງຊາດ | 01 ສະບັບ |
| - ອົງການຈັດຕັ້ງມະຫາຊົນ ບ່ອນລະ | 01 ສະບັບ |
| - ຄະນະເລຂາທິການສະພາແຫ່ງຊາດ | 01 ສະບັບ |
| - ຄະນະ ຕສນຍ, ທ່ານລະ | 01 ສະບັບ |
| - ສຳເນົາ | 01 ສະບັບ |